**ສາມາດອອກຂ່າວໄດ້ທັນທີ**

# ບັນດາຜູ້ນຳ ໃນຂົງເຂດພາກພື້ນແມ່ນ້ຳຂອງ ຮຽກຮ້ອງເຖິງ ການຮ່ວມມື ແລະ ການປົກປ້ອງ ແມ່ນ້ຳຂອງ ໃນເວລາພົບກັບ ຫົວໜ້າກອງເລຂາ ຄມສ ຜູ້ໃໝ່

**ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 14 ມີນາ 2022** — ເພື່ອປົກປ້ອງເສັ້ນທາງນ້ຳ ທີ່ໃຫຍ່ທີ່ສຸດ ໃນອາຊີຕາເວັນອອກສ່ຽງໃຕ້ ໃຫ້ໄດ້ດີຂຶ້ນກວ່າເກົ່ານັ້ນ, ຫົວໜ້າກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ຜູ້ໃໝ່ ກຳລັງເດີນທາງພົບປະບັນດາປະເທດສະມາຊິກ ຄມສ ເພື່ອຮັບຟັງບູລິມະສິດຂອງປະເທດເຫລົ່ານັ້ນ ໂດຍສະເພາະແມ່ນ ວຽກງານຫຼຸດຜ່ອນໄພອັນຕະລາຍ ທີ່ກຳລັງເພີ່ມຂຶ້ນ ຕໍ່ກັບ ຊີວິດ ແລະ ການຫາລ້ຽງຊີບ ຂອງປະຊາຊົນແມ່ນ້ຳຂອງຕອນລຸ່ມ.

ດຣ. ອານຸລັກ ກິດຕິຄຸນ ຄົນລາວຄົນທຳອິດ ທີ່ໄດ້ຖືກເລືອກຕັ້ງ ເປັນຫົວໜ້າກອງເລຂາ ຄມສ ໃນເດືອນມັງກອນ ທີ່ຜ່ານມາ, ໄດ້ໄປຢ້ຽມຢາມ ປະເທດກຳປູເຈຍ ແລະ ປະເທດຫວຽດນາມ ໃນເດືອນນີ້ ເພື່ອພົບປະຕົວຈິງກັບ ຜູ້ນຳຂັ້ນສູງ ຂອງປະເທດເລົ່ານີ້ ແລະ ປຶກສາຫາລື ກ່ຽວກັບ ການຮ່ວມມືແມ່ນ້ຳຂອງ. ນອກເໜືອຈາກ ຄວາມປາດຖະໜາ ໃນການລົງເລິກ ການຮ່ວມມື ລະດັບພາກພື້ນ ແລະ ລະດັບສາກົນແລ້ວນັ້ນ, ບູລິມະສິດອັບດ່ວນອັນໜຶ່ງ ກໍ່ແມ່ນການຂະຫຍາຍຄວາມພະຍາຍາມ ໃນການຕິດຕາມ ແລະ ວັດແທກວ່າ ການພັດທະນາເສດຖະກິດ, ໂຄງການກໍ່ສ້າງໂຄງລ່າງພື້ນຖານທາງນ້ຳ ແລະ ການປ່ຽນແປງດິນຟ້າອາກາດ ເຊິ່ງຮວມທັງ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ທີ່ເກີດຂຶ້ນຫຼາຍຂຶ້ນກວ່າເກົ່ານັ້ນ ກະທົບກັບ ປະຊາຊົນຫຼາຍລ້ານຄົນ ທີ່ອາໃສຢູ່ໃນ ອ່າງແມ່ນ້ຳຂອງຕອນລຸ່ມນັ້ນ ຄືແນວໃດ.

"ການສົນທະນາເປີດກວ້າງນີ້ ຈະຊ່ວຍຂ້າພະເຈົ້າ ຈັດຕັ້ງປະຕິບັດ ແຜນວຽກທີ່ເກີດປະໂຫຍດຫຼາຍຂຶ້ນກວ່າເກົ່າ ສຳລັບອ່າງແມ່ນ້ຳແຫ່ງນີ້ ທີ່ສອດຄ່ອງໜັກແໜ້ນກັບ ບັນດາບູລິມະສິດພາກພື້ນແລະແຫ່ງຊາດ," ກ່າວໂດຍ ດຣ. ອານຸລັກ ຜູ້ທີ່ໄດ້ເຮັດວຽກມາ ຫຼາຍກວ່າໜຶ່ງທົດສະວັດແລ້ວ ໃນກອງເລຂາ ຄມສ ກ່ອນທີ່ຈະຖືກເລືອກຕັ້ງ ຢ່າງເປັນເອກະພາບ ໃນເດືອນມັງກອນ ໃຫ້ເປັນ ຫົວໜ້າກອງເລຂາຜູ້ທີສາມ ທີ່ມາຈາກປະເທດແມ່ນ້ຳຂອງ. "ພວກເຮົາຕ້ອງເຮັດໃຫ້ເກີດມີການປ່ຽນແປງໃໝ່ ເພື່ອໃຫ້ ຄມສ ກ້າວໄປເປັນ ຜູ້ປະຕິບັດງານທີ່ເຂັ້ມແຂງໃນລະດັບພາກພື້ນ ທີ່ມີເທັກໂນໂລຢີສະໄໝໃໝ່ ແລະ ມີຄວາມຮູ້ທັນສະໄໝ ເພື່ອໃຫ້ບໍລິການ ປະເທດຕ່າງໆ ແລະ ປະຊາຊົນຂອງປະເທດເລົ່ານີ້ ໄດ້ຢ່າງຖ່ວງທັນເວລາ."

ຄມສ ປະກອບດ້ວຍ 4 ປະເທດ ທີ່ໄດ້ຮັບຜົນປະໂຫຍດໂດຍກົງ ຈາກການພັດທະນາຕ່າງໆ ທີ່ກ່ຽວຂ້ອງກັບແມ່ນ້ຳຂອງ ມີຄື: ປະເທດກຳປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ ແລະ ຍັງປະກອບດ້ວຍ 2 ປະເທດເພື່ອນບ້ານ ທາງພາກເໜືອ ເທິງແມ່ນ້ຳ ທີ່ມີສະຖານະພາບພິເສດ ກໍ່ຄື ປະເທດຈີນ ແລະ ປະເທດມຽນມາ. ແຕ່ລະປະເທດ ໃນຈຳນວນ 6 ປະເທດນີ້ ມີຜົນປະໂຫຍດລະດັບປະເທດຂອງຕົນ, ມີບູລິມະສິດສະເພາະເຈາະຈົງ ແລະ ບັນຫາທ້າທາຍສະເພາະດ້ານ ເຊິ່ງເຮັດໃຫ້ ການຮ່ວມມືນັ້ນ ມີຄວາມຊັບຊ້ອນ ແຕ່ມັນກໍ່ຄຸ້ມຄ່າທີ່ຈະຮ່ວມມືກັນ.

ໃນວັນທີ 2 ມີນາ, ດຣ. ອານຸລັກ ໄດ້ພົບກັບ ພະນະທ່ານ ລິມ ກີນຮໍ (Lim Kean Hor), ປະທານຄະນະກຳມະການ ແມ່ນ້ຳຂອງແຫ່ງຊາດ ປະເທດກຳປູເຈຍ ແລະ ພະນະທ່ານ ເຕ ນາວຸດ (Te Navuth), ຮອງປະທານຖາວອນ ຂອງຄະນະກຳມະການດັ່ງກ່າວນັ້ນ ໃນນະຄອນຫຼວງພະນົມເປນ. ທ່ານ ລິມ ໄດ້ເນັ້ນໜັກຈະແຈ້ງເຖິງ ຄວາມຈຳເປັນໃນການຕິດຕາມ ແລະ ແລກປ່ຽນຂໍ້ມູນອຸທົກກະສາດ ໃຫ້ຫຼາຍຂຶ້ນກວ່າເກົ່າ ພ້ອມທັງ ການວັດແທກໃຫ້ຖືກຕ້ອງ ເພື່ອເບິ່ງວ່າ ປະລິມານນ້ຳໄຫຼ ຫຼຸດລົງຫຼືສູງຂຶ້ນນັ້ນ ກະທົບກັບ ສະພາບການທາງ ເສດຖະກິດ-ສັງຄົມຂອງພາກພື້ນນີ້ ຄືແນວໃດ. ເພື່ອໃຫ້ເຫັນພາບ ທີ່ຈະແຈ້ງກວ່າເກົ່ານັ້ນ, ໃນປີ 2020 ປະເທດຈີນ ໄດ້ເລີ່ມແລກປ່ຽນຂໍ້ມູນລະດູແລ້ງຂອງຕົນ ນອກຈາກທີ່ໄດ້ແລກປ່ຽນຂໍ້ມູນລະດູຝົນແລ້ວນັ້ນ. ສະນັ້ນແລ້ວ ຄມສ ຄວນເປັນຜູ້ນຳພາ ໃນການສ້າງພາບທີ່ສົມບູນກວ່າເກົ່າ ໂດຍການຕິດຕັ້ງ ສະຖານີຕິດຕາມເພີ່ມຕື່ມ ຕາມສາຂາແມ່ນ້ຳຂອງ.

"ຖ້າມີຂໍ້ມູນຫຼາຍຂຶ້ນ ກວມເອົາໄລຍະເວລາທີ່ດົນກວ່າເກົ່ານັ້ນ ພວກເຮົາຈະສາມາດກໍານົດ ທ່າອ່ຽງໄດ້ຈະແຈ້ງ, ຄາດຄະເນ ລັກສະນະຕ່າງໆ ໃນອະນາຄົດໄດ້ ແລະ ຈັດຕັ້ງປະຕິບັດ ລະບົບແຈ້ງເຕືອນລ່ວງໜ້າ ທີ່ມີປະສິດທິພາບ," ກ່າວໂດຍ ທ່ານ ລິມ, ລັດຖະມົນຕີ ກະຊວງຊັບພະຍາກອນນໍ້າ ແລະ ອຸຕຸນິຍົມ ປະເທດກໍາປູເຈຍ ທັງເປັນສະມາຊິກສະພາບໍລິຫານ ຄມສ ຕາງໜ້າ ປະເທດກໍາປູເຈຍ. "ຖ້າມີຄວາມເຂົ້າໃຈອັນດຽວກັນແລ້ວ ພວກເຮົາຈະສາມາດ ດໍາເນີນມາດຕະການ ໄລຍະສັ້ນແລະໄລຍະກາງ ໃຫ້ເກີດຜົນປະໂຫຍດຫຼາຍຂຶ້ນ."

ຫຼັງຈາກນັ້ນ ໃນວັນທີ 10 ມີນາ, ດຣ. ອານຸລັກ ໄດ້ພົບກັບ ພະນະທ່ານ ປອ. ຕຣັນ ຮົງ ຮາ (Tran Hong Ha) ລັດຖະມົນຕີ ກະຊວງຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ ປະເທດຫວຽດນາມ ແລະ ຮອງລັດຖະມົນຕີ ພະນະທ່ານ ເລ ກົງ ທັນ (Le Cong Thanh) ທີ່ນະຄອນຫຼວງຮານອຍ. ທ່ານລັດຖະມົນຕີ ຮາ ຜູ້ທີ່ເຮັດໜ້າທີ່ເປັນ ສະມາຊິກສະພາບໍລິຫານ ຄມສ ຕາງໜ້າປະເທດຫວຽດນາມນັ້ນ ໄດ້ຮຽກຮ້ອງ ຄມສ ໃຫ້ສຶກສາເບິ່ງ ທາງອອກທາງດ້ານພະລັງງານ ທີ່ເປັນມິດກັບສິ່ງແວດລ້ອມ ຫຼາຍຂຶ້ນ ນອກເໜືອຈາກການນໍາໃຊ້ ພະລັງງານທາງນໍ້າ ໃນປະຈຸບັນນີ້ ແລະ ແນະນໍາໂຄງການຂະໜາດໃຫຍ່ ທີ່ຄາດການໄດ້ ເຊິ່ງບັນດາປະເທດສະມາຊິກ ຄມສ ຮ່ວມມືກັນ ເພື່ອແກ້ໄຂບັນຫາທ້າທາຍ ໃນອະນາຄົດ.

ເຊັ່ນດຽວກັບທີ່ ທ່ານລັດຖະມົນຕີ ລິມ ກິມຮໍ ໄດ້ກ່າວມາກ່ອນແລ້ວນັ້ນ, ທ່ານລັດຖະມົນຕີ ຮາ ກໍ່ຍັງໄດ້ເນັ້ນໜັກໃຫ້ເຫັນເຖິງ ການຮັດແໜ້ນ ສາຍພົວພັນ ລະຫວ່າງ ບັນດາປະເທດສະມາຊິກ ຄມສ ໃຫ້ສະໜໍ່າສະເໝີ ພ້ອມທັງຮັດ ແໜ້ນ ສາຍພົວພັນ ກັບ ບັນດາຄູ່ຮ່ວມງານຕ່າງໆ ເຊັ່ນວ່າ ຍຸດທະສາດການຮ່ວມມືທາງເສດຖະກິດ ແມ່ນໍ້າອິລະວະດີ - ແມ່ນໍ້າເຈົ້າພະຍາ - ແມ່ນໍ້າ ຂອງ (ACMECS), ການຮ່ວມມື ແມ່ນໍ້າລ້ານຊ້າງ - ແມ່ນໍ້າຂອງ (LMC), ສະມາຄົມປະຊາຊາດ ອາຊີຕາເວັນອອກສ່ຽງໃຕ້ (ASEAN) ແລະ ປະເທດຕ່າງໆ ເຊັ່ນວ່າ ປະເທດເກົາຫຼີໃຕ້, ປະເທດສະຫະລັດອາເມລິກາ, ປະເທດອົດສະຕາລີ ແລະ ປະເທດ ຍີ່ປຸ່ນ.

"ພວກເຮົາຕ້ອງການຮັບປະກັນວ່າ ການຮ່ວມມືນີ້ ມີຄວາມໝັ້ນຄົງຖາວອນ ຍ້ອນວ່າ ມັນເປັນສິ່ງທີ່ເຮັດໃຫ້ ອ່າງແມ່ນໍ້າຂອງ ພວກເຮົາ ເຊື່ອມຕໍ່ກັນ, ຈະເລີນຮຸ່ງເຮືອງ ແລະ ປອດໄພ," ກ່າວໂດຍທ່ານ ຕຣັນ. "ຈາກຂະບວນການປະຕິບັດວຽກງານ ຂອງ ພວກເຮົານັ້ນ, ຄມສ ຈະສືບຕໍ່ເຮັດໜ້າທີ່ເປັນ ຕົວແບບໜຶ່ງ ໃຫ້ອ່າງແມ່ນໍ້າແຫ່ງອື່ນໆ ໃນເວລາທີ່ມີການຮ່ວມມື ກ່ຽວກັບນໍ້າ ຂ້າມຊາຍແດນ."

ດຣ. ອານຸລັກ ໄດ້ພົບກັບ ບັນດາຜູ້ນໍາຝ່າຍລາວແລ້ວ ໃນນະຄອນຫຼວງວຽງຈັນ ທີ່ເປັນທີ່ຕັ້ງຂອງ ສໍານັກງານໃຫຍ່ຂອງ ຄມສ. ຕໍ່ຈາກນີ້ໄປ, ທີມງານຂອງ ດຣ. ອານຸລັກ ກໍາລັງວາງແຜນໄປຢ້ຽມຢາມ ນະຄອນຫຼວງບາງກອກ ເພື່ອພົບກັບ ບັນດາຜູ້ຕາງໜ້າ ຝ່າຍໄທ ພ້ອມຍັງວາງແຜນ ຈະເດີນທາງໄປ ນະຄອນຫຼວງປັກກິ່ງ ເພື່ອປະຊຸມກັບ ບັນດາຄູ່ຮ່ວມງານຝ່າຍຈີນ ອີກດ້ວຍ.

**ຂໍ້ມູນສໍາລັບບັນນາທິການຂ່າວ:**

ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງແມ່ນໍ້າຂອງ ຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນໍ້າຂອງ ລະຫວ່າງ ປະເທດກໍາປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນໍ້າ ແລະ ທັງເປັນສູນ ກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນໍ້າ ເພື່ອການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**ຖ້າຕ້ອງການຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**
ທ່ານ ໂສພຽກ ແມ, ພະນັກງານປະຊາສໍາພັນ
ກອງເລຂາ ຄະນະກໍາມາທິການແມ່ນໍ້າຂອງສາກົນ
ອີເມວ: sopheak@mrcmekong.org
ມືຖື: +856-20-77779168